

ຊົງບັນຊາໃຫ້ຮັກ



ຈິດໝາຍຄຳສອນ
ໂດຍ: ອາຈານ ເດເຣັກ ປຣິ້ນຊ

ໃນໂລກທີ່ເຕັມໄປດ້ວຍຄວາມທຸກຍາກລຳບາກ ແລະຄວາມແຕກແຍກນີ້ ເຮົາຈະດຳເນີນຊີວິດ ຕາມພຣະບັນຊາຂອງພຣະເຢຊູທີ່ວ່າ 'ຈົ່ງຮັກຊຶ່ງກັນແລະກັນ' ໄດ້ແນວໃດ? ໃນການວິເຄາະ ຂໍ້ຄິດຈາກພຣະຄຳພີອັນຊົງອິດທິພົນນີ້ ອາຈານ ເດເຣັກ ປຣິ້ນຊ ສະແດງໃຫ້ເຫັນເຖິງວິທີທີ່ຈະ ປະຕິບັດເຊັ່ນນັ້ນໄດ້ ໂດຍຊີ້ໃຫ້ເຮົາເຫັນແບບຢ່າງຂອງພຣະເຢຊູ ແລະວິທີການ ທີ່ພຣະອົງຊົງຮັກ.

ໃນໂຢຮັນ 13 ຂໍ້34-35 ກ່າວວ່າ:

> “ບັດນີ້ ເຮົາມອບກົດບັນຍັດຂໍ້ໃໝ່ໃຫ້ແກ່ພວກເຈົ້າຄື: ຈົ່ງຮັກຊຶ່ງກັນແລະກັນ ເຮົາຮັກພວກເຈົ້າຢ່າງໃດ ພວກເຈົ້າກໍຈົ່ງຮັກຊຶ່ງກັນແລະກັນຢ່າງນັ້ນ. ຖ້າພວກເຈົ້າຮັກຊຶ່ງກັນແລະກັນ ທຸກຄົນກໍຈະຮູ້ວ່າ ພວກເຈົ້າເປັນສາວົກຂອງເຮົາ." (ພຄສ2015)”

ຄວາມຮັກດັ່ງກ່າວບໍ່ແມ່ນທາງເລືອກແຕ່ເປັນພຣະບັນຊາ, ພຣະເຢຊູຕຣັດວ່າສິ່ງນີ້ຄື: ບັນຍັດໃຫມ່.

ຊາວຍິວຕ່າງກໍຄຸ້ນເຄີຍກັນດີກັບບັນຍັດສິບປະການຂອງໂມເຊ ໃນແງ່ໜຶ່ງທ່ານອາດຈະເອີ້ນ ສິ່ງນີ້ວ່າ ເປັນບັນຍັດຂໍ້ສິບເອັດກໍເປັນໄດ້ ແລະຂ້ອຍເຊື່ອວ່າ ບັນຍັດຂໍ້ນີ້ຄອບຄຸມທັງສິບ ປະການໄວ້ທັງໝົດ.

ເຮົາຈະຮັກຊຶ່ງກັນແລະກັນໄດ້ຢ່າງໃດ?

ຮັກໃນແບບທີ່ພຣະເຢຊູຊົງຮັກເຮົາ ຄືການບໍ່ເຫັນແກ່ຕົວ, ການສະຫຼະຕົນເອງ ແລະ ການເຫັນ ແກ່ປະໂຫຍດຂອງຜູ້ອື່ນກ່ອນ. ພຣະເຢຊູຕຣັດວ່າ ຫາກເຈົ້າມີຄວາມຮັກແບບນີ້ແລ້ວຄົນທັງ ໂລກກໍຈະຫັນມາສົນໃຈ ເພາະພວກເຂົາບໍ່ເຫັນສິ່ງນີ້ໃນທີ່ໃດເລີຍ ສິ່ງທີ່ພວກເຂົາເຫັນຄືຄວາມ ເຫັນແກ່ຕົວ ແລະການສວຍໂອກາດ ແຕ່ເຈົ້າສາມາດປ່ຽນສະຖານະການທັງໝົດຢ່າງສິ້ນເຊີງ ໄດ້ໂດຍການສຳແດງຄວາມຮັກຂອງພຣະເຈົ້າ.

ໃນປັດຈຸບັນ ຫາກເຈົ້າຖາມຄົນສ່ວນຫຼາຍວ່າ ຄວາມປະທັບໃຈທີ່ພວກເຂົາມີຕໍ່ຄຣິສຕະຈັກ ຄຣິດສຕຽນຄືຫຍັງ? ພວກເຂົາຈະບໍ່ເວົ້າໃນແງ່ຂອງຄວາມຮັກ ນັ້ນບໍ່ແມ່ນແບບທີ່ໂລກເບິ່ງ ເຫັນເຮົາ ເຖິງວ່າຈະມີຂໍ້ຍົກເວັ້ນບາງຢ່າງທີ່ປະເສີດ ແລະ ໜ້າຍົກຍ້ອງກໍຕາມ ແຕ່ໂດຍ

ລິຂະສິດ © 1970 ພັນທະກິດ ເດເຣັກ ປຼິ້ນຊ

ທ້ອໄປແລ້ວ ພວກເຂົາເບິ່ງເຫັນເຮົາເປັນຄົນເຄັ່ງສາສະໜາ,
ເປັນຄົນທີ່ປະຕິບັດຕາມ ວິໄນທາງສາສະໜາ.

ດັ່ງນັ້ນ, ເຮົາຈຶ່ງມີທາງເລືອກສອງທາງຄື: ເຮົາເລືອກທີ່ຈະຮັກຊຶ່ງກັນ
ແລະກັນໃນແບບທີ່ ພຣະເຢຊູຊົງຮັກເຮົາ ແລະເຊື່ອຟັງ
ຫຼືເຮົາເລືອກທີ່ຈະລົ້ມເຫຼວໃນການຮັກຊຶ່ງກັນ ແລະກັນ ແລະບໍ່ຍອມເຊື່ອຟັງ,
ພຣະເຢຊູບໍ່ເຄີຍໃຊ້ຖ້ອຍຄຳທີ່ໂອ້ສາລະ ພຣະອົງຕຣັດວ່າ "ໂດຍວິທີນີ້
ທຸກຄົນຈະຮູ້ວ່າທ່ານເປັນສາວົກຂອງເຮົາ ຖ້າພວກເຈົ້າຮັກຊຶ່ງກັນແລະກັນ"
ສິ່ງນີ້ສາມາດເຮັດ ໃຫ້ເກີດຂຶ້ນໄດ້.

ຂ້າພະເຈົ້າບໍ່ແມ່ນນັກປະຫວັດສາດ, ແຕ່ຮູ້ວ່າໃນຈັກກະພັດໂຣມັນ
ຊຶ່ງເປັນໜຶ່ງໃນຈັກກະພັດ
ທີ່ຊົງອຳນາດທີ່ສຸດເທົ່າທີ່ປະຫວັດສາດເຄີຍບັນທຶກໄວ້ນັ້ນ ຜູ້ທີ່ບໍ່ເຊື່ອພຣະເຢຊູ
ກ່າວເຖິງ ຄຣິສຕຽນໄວ້ວ່າ " ເບິ່ງແມະ
ບັນດາຄຣິສຕຽນເຫຼົ່ານີ້ຮັກຊຶ່ງກັນແລະກັນຢ່າງໃດ" ນັ້ນຄື
ຄວາມປະທັບໃຈຂອງພວກເຂົາ ແລະສິ່ງນີ້ໄດ້ຊະນະໃຈພວກເຂົາ.

ພາຍໃນໄລຍະເວລາສາມສັດຕະວັດ
ຈັກກະພັດທີ່ຊົງອຳນາດທີ່ສຸດໃນໂລກໃນເວລານັ້ນ ຍອມຮັບ
ຂໍ້ຮຽກຮ້ອງຂອງພຣະເຢຊູ (
ຫມາຍເຖິງຄຳສອນທີ່ໃຫ້ສາວົກຮັກຊຶ່ງກັນແລະກັນ-ຜູ້ແປ) ຜູ້ຊົງ
ເປັນຊ່າງໄມ້ຊາວຍິວທີ່ສິ້ນພຣະຊົນເທິງໄມ້ກາງແຂນຂອງຊາວໂຣມັນ,
ພວກເຂົາບໍ່ສາມາດ ອະທິບາຍ ຫຼື ເຂົ້າໃຈໄດ້ວ່າ
ເຫດໃດຜູ້ຄົນຈາກພູມີພາກທີ່ມີຄວາມຫຼາກຫຼາຍ ທາງດ້ານເຊື້ອຊາດ
ແລະຖານະທາງສັງຄົມທີ່ແຕກຕ່າງກັນຈຶ່ງຮັກຊຶ່ງກັນ ແລະກັນເຊັ່ນນັ້ນ,
ຄຣິສຕຽນໃນຍຸກ
ທຳອິດໄດ້ປູທາງໄປສູ່ວິຖີຊີວິດໃຫມ່ຊຶ່ງຊົງອິດທິພົນໄປທົ່ວອານາຈັກໂຣມັນ.

ຄວາມຮັກເຊັ່ນນີ້ບໍ່ແມ່ນອາລົມຄວາມຮູ້ສຶກ ແຕ່ເປັນການຕັດສິນໃຈ.
ຂ້າພະເຈົ້າຢາກໃຫ້ທ່ານ ກັບໄປເບິ່ງ ຂໍ້ທຳອິດຂອງເພງສັນລະເສີນບົດທີ18
ນີ້ຄືຖ້ອຍຄຳຂອງດາວິດທີ່ກ່າວໄວ້ວ່າ:

> “ຂ້າແດ່ພຣະເຈົ້າຢາເວ ຂ້ານ້ອຍຮັກພຣະອົງ ພຣະອົງເປັນຜູ້ປ້ອງກັນ
> ຂອງຂ້ານ້ອຍ." (ພຄສ2015)”

ດາວິດໄດ້ຕັດສິນໃຈແລ້ວ ທ່ານເຄີຍຕັດສິນໃຈແບບນີ້ຫຼືບໍ່?,
ທ່ານເຄີຍຕັດສິນໃຈຫຼືບໍ່ວ່າ
ຂານ້ອຍຈະຮັກອົງພຣະຜູ້ເປັນເຈົ້າດ້ວຍທຸກສິ່ງທຸກຢ່າງທີ່ຢູ່ພາຍໃນຂ້ານ້ອຍ?

ສິ່ງທີ່ດາວິດເຮັດໃນຕອນນີ້ ເປັນການຕັດສິນໃຈສ່ວນຕົວ ແຕ່ໃນ1 ໂຢຮັນ ບົດທີ4
ນັ້ນ ເຮົາຕ້ອງ ປະເຊີນກັບການຕັດສິນໃຈທີ່ຈະເຮັດຮ່ວມກັນ
ຊຶ່ງຈະພາເຮົາກ້າວໄປໄກກ່ວາ ການຕັດສິນໃຈສ່ວນຕົວ.

> “ເພື່ອນທີ່ຮັກທັ້ງຫຼາຍເອີຍ, ໃຫ້ພວກເຮົາຮັກຊຶ່ງກັນແລະກັນ
> ເພາະວ່າຄວາມຮັກ ທີ່ມາຈາກພຣະເຈົ້າ
> ທຸກຄົນທີ່ຮັກກໍບັງເກີດມາຈາກພຣະເຈົ້າ ແລະຮູ້ຈັກພຣະເຈົ້າ.
> ຜູ້ໃດທີ່ບໍ່ຮັກກໍບໍ່ຮູ້ຈັກພຣະເຈົ້າ ເພາະພຣະເຈົ້າຊົງເປັນຄວາມຮັກ.” (1ໂຢຮັນ
> 4:7-8; ພຄສ2015)

ຈະເຫັນໄດ້ວ່ານັ້ນເປັນການຕັດສິນໃຈທີ່ເຮັດຮ່ວມກັນຄື ໃຫ້ເຮົາຮັກຊຶ່ງກັນ
ແລະກັນ. ດັ່ງນັ້ນ
ບົດທົດສອບສຸດທ້າຍທີ່ບໍ່ແມ່ນການເຫັນດີເຫັນພ້ອມກັນໃນເລື່ອງຂອງຄວາມເຊື
ອ ແຕ່ເປັນ ເລື່ອງຂອງຄວາມຮັກ.

ທຸກຄົນທີ່ຮັກກໍເກີດຈາກພຣະເຈົ້າ, ເພາະທ່ານບໍ່ສາມາດມີຄວາມຮັກແບບນີ້ໄດ້
ເວັ້ນແຕ່ ທ່ານເກີດຈາກພຣະເຈົ້າ
ຍ່ອມຕ້ອງມີຄວາມຮັກແບບນັ້ນສະແດງໃຫ້ເຫັນເປັນຫຼັກຖານ.

ຕົວຢ່າງທີ່ສົມບູນແບບຄື: ພຣະເຢຊູ ພວກເຂົາເຮັດທຸກຢ່າງກັບພຣະອົງ
ພວກເຂົາທຸບຕີ ພຣະອົງ, ແທງພຣະຫັດ ແລະພຣະບາດຂອງພຣະອົງ,
ພວກເຂົາເອົາມຸງກຸດໜາມໃສ່ພຣະສຽນ ຂອງພຣະອົງ,
ພວກເຂົາໃຫ້ພຣະອົງສະເຫວີຍນ້ຳສົ້ມສາຍຊູ, ພວກເຂົາໝິ່ນປະມາດພຣະອົງ
ແຕ່ມີສິ່ງໜຶ່ງທີ່ພວກເຂົາບໍ່ສາມາດເຮັດຫຍັງໃຫ້ພຣະອົງໄດ້ນັ້ນແມ່ນຫຍັງ?

ພວກເຂົາບໍ່ສາມາດເຮັດໃຫ້ພຣະອົງຢຸດຮັກພວກເຂົາໄດ້,
ພຣະອົງຊົງຮັກພວກເຂົາຈົນເຖິງ ທີ່ສຸດ, ທ່ານເຫັນຫຼືບໍ່ວ່າ
ຫາກທ່ານຮັກດ້ວຍຄວາມຮັກແບບນັ້ນແລ້ວ ກໍ່ບໍ່ມີໃຜສາມາດ ຢຸດທ່ານໄດ້
ທ່ານເປັນຄົນດຽວທີ່ມີອິດສະຫຼະຢ່າງແທ້ຈິງບົນໂລກນີ້ ເພາະບໍ່ມີໃຜສາມາດ
ຢຸດທ່ານໃນການເຮັດສິ່ງທີ່ເຈົ້າຕ້ອງການໄດ້.

ນັ້ນເປັນສິ່ງທີ່ຂ້ານ້ອຍເຊື່ອວ່າ ພຣະເຈົ້າຊົງກຳລັງລໍຄອຍຢູ່
ຄືການທີ່ເຮົາຮັກຊຶ່ງກັນແລະກັນ ດ້ວຍຄວາມຮັກທີ່ມາຈາກພຣະອົງ.

ເຮົາສາມາດສົນທະນາເລື່ອງຄວາມເຊື່ອ
ແລະຄວາມຊອບທຳໄດ້ຫຼາຍເທົ່າທີ່ເຮົາຕ້ອງການ,
ແຕ່ຫາກເຮົາບໍ່ໄດ້ເຮັດຫຍັງເພື່ອຜູ້ຄົນທີ່ຕ້ອງການເຮົາຈິງໆແລ້ວ
ຄຳເວົ້າຂອງເຮົາກໍບໍ່ມີ ປະໂຫຍດຫຍັງ

ແລະຈຳນວນຜູ້ທີ່ຕ້ອງການເຮົາກໍຍັງຄົງມີຢູ່ຫຼວງຫຼາຍ.

ຂ້າພະເຈົ້າຮູ້ສຶກອັດສະຈັນໃຈກັບຄຳອະທິຖານຂອງໂປໂລ ໃນຟີລິບປອຍ ບົດທີ3 ຢຸ່ສະເໝີ:

> “ເຮົາຕ້ອງການຈະໄດ້ຮູ້ຈັກກັບພຣະອົງ ແລະ ຮູ້ຈັກຣິດອຳນາດອັນປາກົດ ໃນການທີ່ພຣະອົງຊົງຄືນພຣະຊົນ ແລະຮ່ວມທຸກກັບພຣະອົງ...” (ຟີລິບປອຍ 3:10; ພຄສ2015)

ຂ້າພະເຈົ້າໄດ້ພົບວ່າ
ມີບາງຢ່າງສາມາດໄດ້ມາໂດຍຜ່ານທາງຄວາມທຸກຍາກລຳບາກເທົ່ານັ້ນ.

ຄວາມທຸກຍາກລຳບາກເຮັດໃຫ້ເກີດບາງຢ່າງທີ່ສິ່ງອື່ນບໍ່ສາມາດເຮັດໄດ້,
ຂາພະເຈົ້າຈື່ໄດ້ວ່າ ຕອນທີ່ຢູ່ກອງທັບ,
ຂ້າພະເຈົ້າເຮັດໜ້າທີ່ຢູ່ກອງທັບອັງກິດເອີ້ນວ່າ ເຈົ້າໜ້າທີ່ທາງການແພດ,
ຂ້າພະເຈົ້າໄດ້ຮຽນຮູ້ຈາກການໄດ້ຮ່ວມງານກັບນາຍທະຫານອັງກິດວ່າ
ຜູ້ຄົນທີ່ຜ່ານຊ່ວງເວລາ ທີ່ຍາກລຳບາກ ແລະອັນຕະລາຍມານຳກັນຄື
ພວກເຂົາຖືກຍິງໂຈມຕີຢູ່ໃນສະໜາມຮົບທີ່ມີ ຄຸກຳບັງ
(ຫມາຍເຖິງຄັນຄູທີ່ຂຸດກຳບັງຕົວໃນເວລາສູ້ຮົບ-ຜູ້ແປ), ບໍ່ວ່າພວກເຂົາຈະຢູ່ທີ່ໃດ
ກໍຕາມ ພວກເຂົາກໍຜູກພັນກັນໃນແບບທີ່ຄົນອື່ນບໍ່ສາມາດຜູກພັນກັນໄດ້.

ພວກເຂົາອາດມີຄວາມແຕກແຕ່ງກັນຫຼາຍໃນດ້ານບຸກຄະລິກກະພາບ,
ຖານະທາງສັງຄົມ ແລະ ສິ່ງອື່ນໆ ຫຼວງຫຼາຍ,
ແຕ່ການທີ່ໄດ້ຜ່ານຄວາມຍາກລຳບາກມານຳກັນນັ້ນ ເຮັດໃຫ້ຜູ້ຄົນ ຜູກພັນກັນ
ແລະຂ້ອຍກໍຄິດວ່າ ພຣະເຢຊູ ຊົງຕ້ອງການທີ່ຈະມີຄວາມຜູກພັນກັບເຮົາດ້ວຍ
ເຊັ່ນກັນ ແລະເມື່ອເຮົາຜ່ານຄວາມຍາກລຳບາກໄປພ້ອມໆກັນ ກັບພຣະອົງ
ເຮົາກໍຈະມີຄວາມ ຜູກພັນກັບພຣະອົງໃນແບບທີ່ຕັດຂາດຈາກກັນບໍ່ໄດ້,
ດັ່ງນັ້ນຂ້ອຍຈຶ່ງບໍ່ໄດ້ຍິນດີຕ້ອນຮັບ ກັບຄວາມທຸກຍາກລຳບາກ
ແຕ່ຂ້ອຍກໍຕຽມພ້ອມສຳລັບມັນ, ຂ້ອຍຮູ້ດີວ່າມີບາງສິ່ງທີ່
ພຣະເຈົ້າບໍ່ສາມາດກະທຳໃນຕົວຂ້ອຍໄດ້ໂດຍປາສະຈາກຄວາມທຸກຍາກລຳບາກ.

ແລ້ວເຈົ້າເດ? ເຈົ້າຢາກຈະໃຫ້ຄຳໝັ້ນສັນຍາຫຼືບໍ ?
ເປັນຄຳໝັ້ນສັນຍາຕາມພຣະຄຳພີ ເຈົ້າຈະເວົ້າຕາມຄຳເວົ້າຂອງໂປໂລໄດ້ຫຼືບໍ່ວ່າ
"ເຮົາຕ້ອງການຈະໄດ້ຮູ້ຈັກກັບພຣະອົງ ແລະ ຮູ້ຈັກຣິດອຳນາດອັນປາກົດ
ໃນການທີ່ພຣະອົງຊົງຄືນພຣະຊົນ ແລະຮ່ວມທຸກກັບພຣະອົງ"
ແລ້ວເຈົ້າຈະເຂົ້າໃກ້ສິດກັບອົງພຣະຜູ້ເປັນເຈົ້າຫຼາຍຂຶ້ນກ່ວາທີ່ເຄີຍມາ
ແລະນັ້ນຄືສິ່ງທີ່ ພຣະເຈົ້າຊົງຕ້ອງການ, ຂ້າພະເຈົ້າຢາກຈະນຳສະເໜີ
ສິດທິພິເສດໃຫ້ທ່ານກ່າວຖ້ອຍຄຳ ຕໍ່ໄປນີ້ເບົາໆ.

ຈົດໝາຍຄຳສອນ

ຂໍ້ຄວາມ ຖອດສຽງ: TL-L808-100-LAO
ບັນທຶກຫຼ້າສຸດ: 08 Sep 2025
ເວັ໊ບໄຊທ໌: derekprince.com/lo/resources